ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 42/ຫກ
ນະຄອນຫຼວງວຽງຈັນ, ວັນທີ 11 ຕຸລາ 2018

ສຳນັກງານ ຄຄຊ
ເລກ ...1071......
ວັນທີ 15 OCT 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 24-28/09/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນໜຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,54% ທຽບໃສ່ເອີໂຣ ເນື່ອງຈາກພາຍຫຼັງກອງປະຊຸມຂອງທະນາຄານກາງ ສະຫະລັດອາເມລິກາ ໃນວັນທີ 26/09/2018 ໄດ້ມີມະຕິຕົກລົງເຫັນດີ ປັບຂຶ້ນອັດຕາດອກເບ້ຍນະໂຍບາຍໄລຍະສັ້ນ ຈາກ 2,00% ມາເປັນ 2,25% ແລະ ຕົວເລກດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກ ໃນເດືອນ 9/2018 ຢູ່ທີ່ລະດັບ 138,4 ຈຸດ ຈາກ 134,7 ຈຸດ ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 17-21/09/2018 | ອາທິດນີ້ 24-28/09/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1774 | 1,1595 | 1,54% |
| ເຢນ/ໂດລາ | 112,73 | 113,41 | -0,60% |
| ບາດ/ໂດລາ | 32,370 | 32,340 | 0,09% |
| ເປໂຊ/ໂດລາ | 54,10 | 54,08 | 0,03% |
| ຣູເປັຍ/ໂດລາ | 14.816,00 | 14.900,00 | -0,56% |
| ໂດລາສິງກະໂປ/ໂດລາ | 1,3634 | 1,3679 | -0,33% |
| ຢວນ/ໂດລາ | 6,8415 | 6,8820 | -0,59% |

**1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ**

- ລາຄານ້ຳມັນ ເພີ່ມຂຶ້ນ 2,19% ເປັນ 72,29 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນກາຊວນຂອງ ສະຫະລັດອາເມລິກາ ຫຼຸດລົງ 2,24 ລ້ານບາເຣວ ໃນອາທິດທີ 21/09/2018 ຈາກເພີ່ມຂຶ້ນ 0,84 ລ້ານບາເຣວ ໃນອາທິດຜ່ານມາ;
- ລາຄາຄຳ ຫຼຸດລົງ 1,94% ເປັນ 1.184,21 ໂດລາ/ອອນ ເນື່ອງຈາກເງິນໂດລາແຂງຄ່າຂຶ້ນ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ.

**2. ສະພາບການຊື້-ຂາຍອັດຕາແລກປ່ຽນ**

**2.1 ສະພາບອັດຕາແລກປ່ຽນພາຍໃນ**

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,02% ແລະ ແຂງຄ່າຂຶ້ນ 0,26% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,66% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,89% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 21/09/2018 | | | ອາທິດນີ້ 28/09/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.618,11 | 8.637,88 | 8.629,96 | 8.613,53 | 8.640,67 | 8.628,50 | 0,05% | -0,03% | 0,02% | -3,62% | -3,63% | -3,66% |
| ບາດ | 268,58 | 270,66 | 270,03 | 268,61 | 269,93 | 269,32 | -0,01% | 0,27% | 0,26% | -5,05% | -4,88% | -4,89% |

**2.2 ສະພາບຖານເງິນຕາແລະປະລິມານເງິນ M2**

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 1,46% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 12,24%;
- ປະລິມານເງິນ M2 ຫຼຸດລົງ 0,09% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,44%.

**2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ**

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (21-27/09/2018) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 37,05 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 17,98 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 55,03 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 232,06 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 113,28 ລ້ານບາດ ແລະ ຂາຍເງິນບາດໄດ້ 345,34 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ເພີ່ມຂຶ້ນ 53,74% ແຕ່ເງິນບາດ ຫຼຸດລົງ 32,17%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 18,97 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 72,20 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 1,86 ລ້ານໂດລາ ແລະ ເງິນບາດ ຈຳນວນ 23,20 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 14-20/09/2018 | | ອາທິດນີ້ 21-27/09/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **20,39** | **173,45** | **17,98** | **113,28** | **-11,82%** | **-34,69%** |
| - ທ/ຄທຸລະກິດລັດ | 8,83 | 74,48 | 8,42 | 65,40 | -4,64% | -12,19% |
| - ທ/ຄທຸລະກິດອື່ນໆ | 11,56 | 98,97 | 9,56 | 47,88 | -17,30% | -51,62% |
| **2. ການຂາຍເງິນຕາຕ່າງປະເທດ** | **27,10** | **502,73** | **55,03** | **345,34** | **103,06%** | **-31,31%** |
| - ທ/ຄທຸລະກິດລັດ | 11,20 | 157,51 | 31,42 | 99,64 | 180,54% | -36,74% |
| - ທ/ຄທຸລະກິດອື່ນໆ | 15,90 | 345,22 | 23,61 | 245,70 | 48,49% | -28,83% |
| **ຊື້-ຂາຍສຸດທິ ທທກ** | **-6,71** | **-329,28** | **-37,05** | **-232,06** | **452,16%** | **-29,53%** |
| - ຜິດດ່ຽງຊື້-ຂາຍ | -32,91% | -189,84% | -206,06% | -204,86% | 526,14% | 7,91% |
| - **ມູນຄ່າການຊື້-ຂາຍ** | **47,49** | **676,18** | **73,01** | **458,62** | **53,74%** | **-32,17%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-14,35** | **-95,00** | **-18,97** | **-72,20** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 14,35 | 95,00 | 18,97 | 72,20 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **1,64** | **36,10** | 1,86 | 23,20 | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 09/2018 ຄາດວ່າຈະຢູ່ໃນລະດັບ 2,80%.

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ເພີ່ມຂຶ້ນ 163,2% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 83,03 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 63,1% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 28,33 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 757 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 643 ສະບັບ ເທົ່າກັບ 564,04% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 457,20 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 399,36 ຕື້ກີບ ເທົ່າກັບ 690,46%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (21-27/09/2018) ມີທັງໝົດ 4.018 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.929 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 287 ຕື້ກີບ ຈາກ 942,47 ຕື້ກີບ ມາເປັນ 1.229,76 ຕື້ກີບ ເທົ່າກັບ 30,48%;

- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 89 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 42,34 ຕື້ກີບ ຈາກ 69,13 ຕື້ກີບ ມາເປັນ 111,48 ຕື້ກີບ ເທົ່າກັບ 61,25%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 869,98 ຈຸດ ຫຼຸດລົງ ຈາກ 889,32 ຈຸດ ຫຼື ເທົ່າກັບ 2,17% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 255.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,01 ຕື້ກີບ ຫຼຸດລົງ 57,84% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 66,26% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ PTL, LCC, MHTL, EDL-Gen ແລະ LWPC.

➢ <u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 81.300 | 455.380.000 | 5.600 | **69.000** | **386.415.000** | **5.650** | -15,13 | -15,14 | 0,89 |
| **EDL-GEN** | 113.700 | 494.700.000 | 4.350 | **74.300** | **309.685.000** | **4.250** | -34,65 | -37,40 | -2,30 |
| **LWPC** | - | - | 8.100 | **100** | **800.000** | **8.000** | - | - | -1,23 |
| **PTL** | - | - | 1.700 | **2.000** | **3.165.000** | **1.550** | - | - | -8,82 |
| **SVN** | 100 | 160.000 | 1.600 | **100** | **160.000** | **1.600** | - | - | - |
| **PCD** | 200 | 240.000 | 1.200 | **100** | **120.000** | **1.200** | -50,00 | -50,00 | - |
| **LCC** | - | - | 2.000 | **1.500** | **2.900.000** | **1.900** | - | - | -5,00 |
| **MHTL** | 490.300 | 1.463.605.000 | 3.050 | **107.900** | **314.605.000** | **2.900** | -77,99 | -78,50 | -4,92 |
| **LAT** | - | - | - | **238.300** | **333.610.000** | **1.200** | - | - | - |
| ທັງໝົດ | 685.600 | 2.414.085.000 | | **255.000** | **1.017.850.000** | - | -62,81 | -57,84 | |

5. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ: ❶ ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ອຳນວຍການ ທຫລ ປະຈຳເດືອນ ກັນຍາ 2018, ❷ ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ II ປະຈຳປີ 2018, ❸ ກອງປະຊຸມທະນາຄານທຸລະກິດລາວ-ໄທ ຄັ້ງທີ 7 ປະຈຳປີ 2018, ❹ ກອງປະຊຸມຄະນະຊີ້ນຳລວມຊຸກຍູ້ພັນທະບັດລັດຖະບານເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ, ❺ ກອງປະຊຸມປຶກສາຫາລືຄັ້ງປະຖົມມະລຶກ ຂອງຄະນະຮັບຜິດຊອບຄົ້ນຄວ້າຮ່າງລັດຖະບັນຍັດປະທານປະເທດກ່ຽວກັບການລົບລ້າງຄ່າທຳນຽມຊື້-ຂາຍຮຸ້ນຈົດທະບຽນ, ການຫຼຸດອາກອນກຳໄລ ການເກັບຄ່າທຳນຽມ ແລະ ຄ່າບໍລິການທີ່ຕິດພັນກັບຂະແໜງການທະນາຄານ ແລະ ຫຼັກຊັບ, ❻ ກອງປະຊຸມຄະນະພິທີການ, ງົບປະມານ ແລະ ສະຖານທີ່ ໃນການສະເຫຼີມສະຫຼອງວັນສ້າງຕັ້ງທະນາຄານ ຄົບຮອບ 50 ປີ, ❼ ກອງປະຊຸມຄະນະຮັບຜິດຊອບປັບປຸງຮ່າງດຳລັດວ່າດ້ວຍຄັງສຳຮອງເງິນຕາຕ່າງປະເທດຂອງລັດ, ❽ ກອງປະຊຸມຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ), ❾ ພິທີລົງນາມ ແລະ ໄຫວ້ອາໄລຕໍ່ ສະຫາຍ ເຈີນດ່າຍ ກວາງ, ກຳມະການກົມ

ການເມືອງ, ປະທານປະເທດແຫ່ງ ສ.ສ ຫວຽດນາມ ທີ່ (ສະຖານທູດຫວຽດນາມ) ແລະ ❿ ພິທີເປີດໂຕຜະລິດເງິນດ່ວນ ຊຸມຊົນ (BECOME) ໄລຍະທີ 2;

- ສຳເລັດຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກຊ່ຽວຊານຈີນ.

**III. ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ຢ່າງໃກ້ຊິດ;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ, ❷ ກອງປະຊຸມລະດັບສູງກ່ຽວກັບການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020), ❸ ກອງປະຊຸມຄະນະຄົ້ນຄວ້ານິຕິກຳຄຸ້ມຄອງເງິນຄຣິບໂຕ (CryptoCurrency), ❹ ກອງປະຊຸມປຶກສາຫາລືຕໍ່ເນື້ອໃນຮ່າງຂໍ້ຕົກລົງວ່າດ້ວຍການກູ້ຢືມຈາກຕ່າງປະເທດຂອງທະນາຄານທຸລະກິດ, ❺ ພິທີເປີດງານວາງສະແດງຜົນງານ 50 ປີ ທຫລ ແລະ ❻ ພິທີເປີດນຳໃຊ້ໂປຣແກມອິນເຕີແບງ (Interbank);

- ກະກຽມເຂົ້າຮ່ວມຊົມເຊຍການແຂ່ງຂັນກິລາບານເຕະ, ກິລາມວນຊົນ ແລະ ການແຂ່ງຂັນສິລະປະຮອບຊິງຊະນະເລີດ ເພື່ອສະເຫຼີມສະຫຼອງ ວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ;

- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກຊ່ຽວຊານກອງທຶນການເງິນສາກົນ;

- ໃຫ້ສຳພາດແກ່ວາລະສານ The Report Company ຂອງປະເທດແອດສະປາຍ.

ຫົວໜ້າຫ້ອງການ

ພັດສະຖາພອນ ແກ້ວວົງວິຈິດ